ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະນຳຂອງທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມການນຳລະດັບສູງກ່ຽວກັບການຫັນເປັນດີຈິຕ໋ອນແຫ່ງຊາດ ແລະ ການວາງສະແດງຜົນງານໃນງານສັບປະດາ ດີຈິຕ໋ອນ 2022




ໃນລະຫວ່າງວັນທີ 21-25 ທັນວາ 2022 ທີ່ ຫໍປະຊຸມແຫ່ງຊາດ. ຄະນະນຳຂອງທະນາຄານແຫ່ງ ສປປ ລາວ (ທຫລ) ເຊິ່ງນຳໂດຍ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ໄດ້ເຂົ້າຮ່ວມກອງປະຊຸມການນຳລະດັບສູງກ່ຽວກັບການຫັນເປັນດີຈິຕ໋ອນແຫ່ງຊາດ ພາຍໃຕ້ຄຳຂວັນ: "ການຮ່ວມມືທົ່ວສັງຄົມເພື່ອຫັນເປັນດີຈິຕ໋ອນ ຂອງ ສປປ ລາວ". ໃນກອງປະຊຸມໄດ້ນຳສະເໜີກ່ຽວກັບການຫັນເປັນດີຈິຕ໋ອນຂອງວຽກງານຂະແໜງການຕ່າງໆ ເຊັ່ນ: ການນຳໃຊ້ດີຈິຕ໋ອນເຂົ້າໃນວຽກງານສາທາລະນະສຸກ, ການຄຸ້ມຄອງແຮງງານແບບດີຈິຕ໋ອນ, ການນຳໃຊ້ເຕັກໂນໂລຊີດີຈິຕ໋ອນເຂົ້າໃນວຽກງານແຜນການ ແລະ ຄຸ້ມຄອງການລົງທຶນ, ການສ້າງລະບົບຄຸ້ມຄອງລັດຖະກອນ ແລະ ພົນລະເມືອງ, ການໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງສື່ສັງຄົມອອນລາຍ, ການຫັນວຽກງານໂລຈິສຕິກເປັນທັນສະໄໝ, ການຫັນວຽກງານຄຸ້ມຄອງທີ່ດິນເປັນທັນສະໄໝ, ການນຳໃຊ້ເຕັກໂນໂລຊີດີຈິຕ໋ອນເຂົ້າໃນວຽກງານກະສິກຳ, ການພັດທະນາ ແລະ ຄຸ້ມຄອງການຄ້າເອເລັກໂຕຣນິກ ແລະ ໃນວາລະຂອງກອງປະຊຸມນີ້, ທ່ານຮອງຜູ້ວ່າການ ທຫລ ໄດ້ນຳສະເໜີການຫັນເປັນດີຈິຕ໋ອນຂອງຂະແໜງການທະນາຄານ ກໍ່ຄືວຽກງານການນຳໃຊ້ດີຈິຕ໋ອນໃນວຽກງານຊຳລະສະສາງ ກໍ່ຄື ທຫລ ມີພາລະບົດບາດໃນການກຳນົດນະໂຍບາຍ, ຕິດຕາມກວດກາແລະ ພັດທະນາລະບົບການຊຳລະ, ເຄື່ອງມືການຊຳລະໃຫ້ທັນສະໄໝ ເພື່ອເອື້ອອຳນວຍໃຫ້ແກ່ການປະຕິບັດນະໂຍບາຍເງິນຕາ, ການຮັກສາສະຖຽນລະພາບທາງດ້ານການເງິນ ແລະ ສາມາດເຊື່ອມໂຍງລະບົບການເງິນ-ເງິນຕາກັບສາກົນເທື່ອລະກ້າວ. ຂະແໜງການທະນາຄານໄດ້ພັດທະນາການໃຫ້ບໍລິການຊຳລະເປັນທັນສະໄໝຫຼາຍຜະລິດຕະພັນເຊັ່ນ: ບັດຊຳລະ (Credit card, Debit card, ATM), ເງິນເອເລັກໂຕຣນິກ, ການຮັບຊຳລະເງິນທາງເອເລັກໂຕຣນິກ, ໂອນເງິນທາງເອເລັກໂຕຣນິກ

ແລະ ອື່ນໆ. ໃນນີ້, ທຫລ ໄດ້ມີທິດທາງແຜນການພັດທະນາລະບົບການຊໍາລະ ຄື: ① ຮອງຮັບການຫັນເປັນເສດຖະກິດດິຈິຕ໋ອນ ແລະ ການຫັນເປັນດິຈິຕ໋ອນ; ② ສ້າງ ແລະ ພັດທະນາເຄື່ອງມືການຄຸ້ມຄອງມະຫາພາກດ້ານລະບົບການຊໍາລະ; ③ ສ້າງ ແລະ ພັດທະນາລະບົບການຊໍາລະໃຫ້ມີຄວາມໝັ້ນຄົງ; ④ ສ້າງຄວາມເຂັ້ມແຂງໃຫ້ລະບົບພື້ນຖານໂຄງລ່າງການຊໍາລະ ແລະ ການໃຫ້ບໍລິການຊໍາລະໃຫ້ມີຄວາມປອດໄພ, ໄດ້ມາດຕະຖານ, ສາມາດເຊື່ອມໃຊ້ຮ່ວມກັບພາກພື້ນ ແລະ ສາກົນ ແລະ ⑤ ການຄ້າເອເລັກໂຕຣນິກ ແລະ ການເຂົ້າເຖິງບໍລິການດ້ານການເງິນ.





ນອກຈາກນີ້, ໃນງານສັບປະດາ ດິຈິຕ໋ອນ 2022 ດັ່ງກ່າວ, ທຫລ ໄດ້ເຂົ້າຮ່ວມວາງສະແດງຜົນງານດ້ານການຊໍາລະສະສາງ ເຊິ່ງໄດ້ຮັບຄວາມສົນໃຈຈາກການນໍາຂັ້ນສູງ ແລະ ຜູ້ເຂົ້າຮ່ວມເປັນຈໍານວນຫຼວງຫຼາຍ.




**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ